ກົມປູກຝັງຮ່ວມໃຈ ປູກຕົ້ນໄມ້
ເນື່ອງໃນໂອກາດວັນປູກຕົ້ນໄມ້ແຫ່ງຊາດ ແລະ ວັນເດັກນ້ອຍສາກົນ
ກົມປູກຝັງໄດ້ມີກິດຈະກຳປູກຕົ້ນໄມ້ ຢູ່ທີ່ ສູນພັດທະນາກະສິກຳສະອາດ
ໃນຕອນເຊົ້າ ວັນທີ່ 3 ມີຖຸນາ 2016 ຜ່ານມາ ໂດຍການນຳພາຂອງ ທ່ານ ວິໄລສຸກ
ເຄນນະວົງ ຄະນະພັກກະຊວງກະສິກຳ ແລະ ປ່າໄມ້, ເລຂາຄະນະພັກຮາກຖານກົມປູກຝັງ,
ຫົວໜ້າກົມປູກຝັງ ພ້ອມດ້ວຍພະນັກງານລັດຖະກອນ ຂອງກົມປູກຝັງເຂົ້າຮ່ວມ ຈຳນວນ 70
ຄົນ.

ເບັ້ຍໄມ້ ທີ່ນຳມາປູກໃນຄັ້ງນີ້ແມ່ນ ປະກອບດ້ວຍ: ໄມ້ດູ່ລາຍ, ໄມ້ແຕ້ ຈໍານວນ 200 ເບັ້ຍ
ທີ່ປູກໃສ່ຕາມຂອບທາງຂອງສູນພັດທະນາກະສິກຳສະອາດ ແລະ ປູກຕົ້ນກວ້ຍຈຳນວນໜື່ງ
ຊື່ງນີ້ກໍ່ເປັນກິດຈະກຳໜື່ງທີ່ປະກອບສ່ວນເຂົ້າ ໃນນະໂຍບາຍ ຂອງລັດຖະບານ
ທີ່ຈະເຮັດໃຫ້ປະເທດລາວ ມີເນື້ອທີ່ ປ່າໄມ້ ປົກຄຸມ 75%
ໃນສຸມປີຕໍ່ໜ້າ.

ຫຼັງຈາກນັ້ນ ທ່ານຫົວໜ້າກົມປູກຝັງ ກໍ່ໄດ້ນຳພາ ອ້າຍນ້ອງພະນັກງານລັດຖະກອນ
ສ້າງຂະບວນການ ແລະ ພາລູກຫຼານ ສະຫຼອງວັນເດັກນ້ອຍສາກົນ
ຢ່າງເບີກບານມ່ວນຊືນ.

ທ່ານ ວິໄລສຸກ ເຄນນະວົງ ຖ່າຍຮູບຮ່ວມກັບພະນັກງານ ກົມປູກຝັງ
 1 / 2

ກົມປູກຝັງຮ່ວມໃຈ ປູກຕົ້ນໄມ້

ໂດຍ:ສຸນາລີ ສົມມະນີ
 2 / 2